*Souphanouvong University Journal of Multidisciplinary Research and Development*
**2024,Vol. 10, No. 1, 171-182**
**https://doi.org/10.69692/SUJMRD1001171**

# Growth, Transformation and their Driving Forces of Kaysonphomvihan City

**Luangphasy SENGONKEO[1], Soukanh CHITPANYA, Phonguen VENVONGTHONG, Daohieng INTHAVONG, Saikhim SIHAVONG, Viengsavnah LATSAPHET**

*Laboratory of Sustainable Urban and Regional Planning, Department of Urban Environment, Faculty of Architecture, National University of Laos, Lao PDR*

**[1]Correspondence:**
*Luangphasy SENGONKEO, Department of Urban Environment, Faculty of Architecture, National University of Laos, Telephone: +85620 23448447, Email: S.luangphasy@nuol.edu.la*

**Article Info:**
*Submitted: February 23, 2024*
*Revised: March 11, 2024*
*Accepted: March 18, 2024*

**Abstract**

This paper examines the significant growth and change experienced by Kaysone Phomvihan City in the Lao PDR from 2005 to 2020. The city's strategic location at the intersection of the East-West Economic Corridor (EWEC), the Savannakhet-Seno Special Economic Zone, and the national highway Route 13 positions it for substantial economic development. Furthermore, the presence of the Savan Seno Special Economic Zone and the Mekong River Bridge strengthens this potential. The research investigates the interplay between these factors and the resulting growth in population, economy, and physical infrastructure within the city.

The analysis reveals a substantial population increase of 36.88% (from 112,915 in 2005 to 178,893 in 2020). Economic growth is also evident, with GDP per capita rising 75.34% (from $608 in 2005 to $2,466 in 2020). The built-up area of the city has expanded by 50.06% (from 432 hectares in 2005 to 865 hectares in 2020). These findings highlight the rapid transformation of Kaysone Phomvihan during the study period.

The paper goes beyond simply documenting growth; it delves into the driving forces behind this urban transformation. The research identifies key factors such as strategic location, infrastructure development, and economic zone establishment as crucial elements propelling the city's growth. Understanding these drivers is essential for informing sustainable planning, control, and future development strategies for Kaysone Phomvihan City.

**Keyworlds**: *Kaysone Phomvihan City, Lao PDR, Urban Growth, Economic Development, Infrastructure development, Special Economic Zones*

## 1. ພາກສະເໜີ

ການເຕີບໂຕຂອງຕົວເມືອງ (Urban Growth) ກຳລັງເປັນປະກົດການທາງສັງຄົມ ທີ່ມີການຄວາມສຳຄັນຫຼາຍ ທັງທີ່ໄດ້ເກີດຂຶ້ນໃນປະເທດພັດທະນາແລ້ວ ແລະ ປະເທດທີ່ກຳລັງພັດທະນາ ໂດຍສະເພາະແມ່ນໃນປະເທດທີ່ກຳລັງພັດທະນາ ແມ່ນມີແນວໂນ້ມການເຕີບໂຕເປັນເມືອງທີ່ສູງຂຶ້ນເລື້ອຍໆ, ເຖິງແມ່ນວ່າ ປະຊາກອນສ່ວນໃຫ່ຍ ຈະອາໄສຢູ່ຊົນນະບົດກໍ່ຕາມ ແຕ່ວ່າປະຊາກອນໃນຕົວເມືອງເລີ່ມມີການຂະຫຍາຍຕົວຢ່າງໄວວາ ເຊິ່ງຈະເຫັນໄດ້ຊັດເຈນ ຈາກພູມີພາກອາຊີຕາ ເວັນອອກສ່ຽງໃຕ້ເປັນຕົ້ນແມ່ນປະເທດມາເລເຊຍ, ປະເທດອິນໂດເນເຊຍ, ປະເທດຟີລິບປິນ ແລະ ປະເທດໄທເປັນຕົ້ນ. ປະເທດທີ່ກຳລັງພັດທະນາເຫຼົ່ານີ້ ຕ່າງໄດ້ຮັບຜົນກະທົບໃນເລື່ອງພາວະຄວາມເປັນເມືອງເຊັ່ນດຽວກັນ ໂດຍການກາຍເປັນເມືອງຊ່ວຍສ້າງໂອກາດ ແລະ ຄວາມທ້າທາຍບໍ່ພຽງ ແຕ່ກະທົບກັບປະຊາຊົນຜູ້ຢູ່ອາໄສໃນເຂດຕົວເມືອງ ຫຼື ຜູ້ບໍລິຫານເມືອງເທົ່ານັ້ນ ແລະ ຍັງໄດ້ສົ່ງຜົນຕໍ່ປະຊາກອນທີ່ຜູ້ຢູ່ອາໄສຢູ່ເຂດຕົວເມືອງ ແລະ ເຂດຊານເມືອງດ້ວຍກັນ, ປະກົດການນີ້ ແມ່ນໄດ້ສົ່ງຜົນໃຫ້ທິດທາງການພັດທະນາຕົວເມືອງຢູ່ ສປປ ລາວ ໄດ້ຮັບການຊຸກດັນໃຫ້ເປັນສູນກາງ ການປົກຄອງ, ການບໍລິການ, ການຄົມມະນາຄົມ, ທາງດ້ານການສຶກສາ, ທາງດ້ານເສດຖະກິດ-ສັງຄົມ ເຊິ່ງຈະເຫັນໄດ້ຊັດເຈນ ຈາກການລົງທຶນຂອງຂອງໂຮງຈັກໂຮງງານອຸດສາຫະກຳຢູ່ອ້ອມຮອບຕົວເມືອງໃຫຍ່ໃນ ສປປ ລາວ ເນື່ອງຈາກ ສປປ ລາວ ມີສັກກະຍະພາບທີ່ຕັ້ງທີ່ເໝາະສົມ, ໂອກາດສ່ຽງທາງດ້ານໄພທຳມະຊາດ ແມ່ນມີນ້ອຍ ເຮັດໃຫ້ເກີດປະກົດການກາຍເປັນເມືອງຢ່າງໄວວາ (UN-Habitat, 2020).

ຈາກຂໍ້ມູນປະຊາກອນໂດຍອີງການອະນາໄມໂລກໄດ້ຄາດຄະເນແນວໂນ້ມຂອງປະຊາກອນເຫັນວ່າ ປະຊາກອນ 50 ສ່ວນຮ້ອຍ ເທິງໂລກອາໄສຢູ່ພື້ນທີ່ເມືອງ ຈາກອະດີດຊ່ວງ ປີ ຄ.ສ 1990 ມີປະຊາກອນອາໄສຢູ່ໃນພື້ນທີ່ເມືອງ 30 ສ່ວນຮ້ອຍເທົ່ານັ້ນ, ຕໍ່ມາປີ ຄ.ສ 2010 ແລະ ປີ ຄ.ສ 2030 ປະຊາກອນໂລກອາໄສຢູ່ໃນພື້ນທີ່ເມືອງ 60 ສ່ວນຮ້ອຍ ແລະ 70 ສ່ວນຮ້ອຍ ຕາມລາດັບ, ຢູ່ທະວີບອາຊີ ຊ່ວງປີ ຄ.ສ 1950 ມີປະຊາກອນອາໄສຢູ່ພື້ນທີ່ເມືອງໝົດ 232 ລ້ານຄົນ ຄິດເປັນ 17 ສ່ວນຮ້ອຍ ຂອງຈຳນວນປະຊາກອນທັງໝົດຕໍ່ມາປີ ຄ.ສ 2005 ມີປະຊາກອນອາໄສຢູ່ໃນພື້ນທີ່ເມືອງ ເພີ່ມຂຶ້ນຢ່າງໄວວາ ໂດຍມີຈຳນວນປະຊາກອນເມືອງທັງໝົດ 1,562 ລ້ານຄົນ ຫຼື ເທົ່າກັບ 40 ສ່ວນຮ້ອຍ ຂອງປະຊາກອນ ທັງໝົດໃນທະວີບອາຊີ ແລະ ມີແນວໂນ້ມທີ່ຈະເກີດການປ່ຽນແປງທາງດ້ານປະຊາກອນຂຶ້ນໃນປີ ຄ.ສ 2030 ມີໂອກາດທີ່ຈຳນວນປະຊາກອນເມືອງເພີ່ມຂຶ້ນເປັນ 2,664 ລ້ານຄົນ ຫຼື ເທົ່າກັບ 55 ສ່ວນຮ້ອຍ ຂອງປະຊາກອນທັງໝົດ (Roberts & Kanaley, 2006) ທີ່ຜ່ານມາທະວີບອາຊີ ມີການປ່ຽນແປງຢ່າງເຫັນໄດ້ຊັດເຈນ ໃນດ້ານປະຊາກອນເຮັດໃຫ້ເບິ່ງເຫັນພາບປັນຫາ, ອຸປະສັກຕ່າງໆທີ່ເກີດຂຶ້ນໃນພື້ນທີ່ເມືອງ ຊຶ່ງມີແນວໂນ້ມໃນອະນາຄົດວ່າ ທະວີບອາຊີເກີດການກາຍເປັນເມືອງທີ່ສູງຂຶ້ນຢ່າງຕໍ່ເນື່ອງໃນປະເທດທີ່ສຳຄັນ, ສຳລັບອາຊີຕາເວັນອອກສ່ຽງໃຕ້ຊ່ວງປີ ຄ.ສ 1950 ມີປະຊາກອນອາໄສຢູ່ໃນເມືອງຈຳນວນ 15.5 ສ່ວນຮ້ອຍ ຂອງປະຊາກອນທັງໝົດຕໍ່ມາປີ ຄ.ສ 2010 ມີປະຊາກອນ ອາໄສໃນເມືອງເພີ່ມຂຶ້ນ 41.8 ສ່ວນຮ້ອຍ ຫຼື ປະມານ 250 ລ້ານຄົນ ແລະ ໃນອະນາຄົດປີ ຄ.ສ 2025 ປະຊາກອນທີ່ຢູ່ໃນເມືອງຂອງອາຊີຕາເວັນອອກສ່ຽງໃຕ້ມີແນວໂນ້ມເພີ່ມຂຶ້ນ 50 ສ່ວນຮ້ອຍ ເມື່ອພິຈາລະນາໂດຍລວມແລ້ວ ປະເທດໃນອາຊີຕາເວັນອອກ ສ່ຽງໃຕ້ທັງໝົດ 11 ປະເທດມີຄວາມເປັນເມືອງໃນປັດຈຸບັນນີ້ຄິດໄລ່ລວມກັນແລ້ວ 41.8 ສ່ວນຮ້ອຍ, ສ່ວນປະເທດລາວ ຈະເຫັນໄດ້ວ່າ ໃນອະນາຄົດແມ່ນມີແນ້ວໂນ້ມການກາຍເປັນຕົວເມືອງສູງ (Centre for Development and Environment University of Bern, Switzerland, 2018).

ຈາກປະກົດການທີ່ໄດ້ກ່າວມາ ທີມງານການຄົ້ນຄວ້າວິໄຈ ຈຶ່ງໄດ້ມີຈຸດປະສົງຂອງການຄົ້ນຄ້ວາ ກ່ຽວກັບ ການເຕີບໂຕ, ການປ່ຽນແປງ ແລະ ແຮງຂັບເຄື່ອນໃນການພັດທະນາຕົວເມືອງນະຄອນໄກສອນພົມວິຫານ ເພື່ອສ້າງຄວາມເຂົ້າໃຈປະກົດການ, ແຮງຂັບເຄື່ອນກໍ່ຄືປັດໄຈທີ່ພາໃຫ້ຕົວເມືອງມີການເຕີບໂຕ ແລະ ເພື່ອເປັນແນວທາງໃນການວາງແຜນຄວບຄຸມການພັດທະນາຕົວເມືອງໃຫ້ມີການເຕີບໂຕທີ່ຍືນຍົງໄດ້ດີຂຶ້ນໃນອະນາຄົດ.

## 2. ອຸປະກອນ ແລະ ວິທີການ

### 2.1. ເຄື່ອງມືໃນການຄົ້ນຄວ້າ

ໃນການສຶກສາຄົ້ນຄວ້າວິໄຈໃນຄັ້ງນີ້ແມ່ນ ຈະສຶກສາເບິ່ງການເຕີບໂຕຕົວຂອງເມືອງ ແລະ ປັດໄຈທີ່ພາໃຫ້ມີການເຕີບໂຕຂອງເມືອງ ໂດຍນຳໃຊ້ເຄື່ອງມືໃນການເກັບກຳຂໍ້ມູນ

ແມ່ນມີຢູ່ສອງພາກສ່ວນຄື: ເຄື່ອງມືເກັບກຳຂໍ້ມູນທາງດ້ານພື້ນທີ່ ແລະ ເຄື່ອງມືເກັບກຳຂໍ້ມູນທາງດ້ານເວລາ ດັ່ງລຸ່ມນີ້:

ເຄື່ອງມືເກັບກຳຂໍ້ມູນທາງດ້ານພື້ນທີ່: ແມ່ນນຳໃຊ້ເຄື່ອງມືໂປຣແກຣມ GIS, Google Earth ເພື່ອເບິ່ງການເຕີບໂຕ ແລະ ການປ່ຽນແປງດ້ານກາຍຍະພາບຂອງຕົວເມືອງ ຄື: ການເຕີບໂຕຂອງຈຳນວນສິ່ງປຸກສ້າງອາຄານ, ການເຕີບໂຕເນື້ອທີ່ ສິ່ງປຸກສ້າງອາຄານ 4 ຊ່ວງໄລຍະ ຄື: 2005, 2010, 2015 ແລະ 2020.

ເຄື່ອງມືເກັບກຳຂໍ້ມູນທາງດ້ານເວລາ: ຈະນຳໃຊ້ເຄື່ອງມືເສັ້ນສະແດງເວລາ (Timeline) ເບິ່ງການປ່ຽນແປງຂອງແຮງຂັບເຄື່ອນດ້ານນະໂຍບາຍ, ດ້ານການວາງແຜນ, ດ້ານໂຄງການພັດທະນາ, ດ້ານເຫດການທີ່ສຳຄັນ ແລະ ດ້ານການປ່ຽນແປງທາງດ້ານປະຊາກອນ ແລະ ຄົວເຮືອນ, ດ້ານການປ່ຽນແປງທາງດ້ານເສດຖະກິດ 4 ຊ່ວງໄລຍະຄື: 2005, 2010, 2015 ແລະ 2020 ເພື່ອເບິ່ງຄວາມສຳພັນຂອງບັນດາແຮງຂັບເຄື່ອນເຫຼົ່ານັ້ນ ກັບການປ່ຽນແປງທາງດ້ານກາຍຍະພາບຂອງຕົວເມືອງ.

## 2.2 ກຸ່ມຕົວຢ່າງໃນການຄົ້ນຄວ້າ

ກຸ່ມຕົວຢ່າງຂອງປະຊາກອນ ແລະ ຄົວເຮືອນ: ການເຕີບໂຕທາງດ້ານປະຊາກອນ ແລະ ຄົວເຮືອນແມ່ນຈະເບິ່ງຈາກຈຳນວນສະຖິຕິປະຊາກອນ ແລະ ຄົວເຮືອນໃນຕົວເມືອງ ນະຄອນໄກສອນພົມວິຫານ ແຕ່ປີ 2005 - 2020 ເຊິ່ງເປັນເວລາ 15 ປີ ໂດຍເບິ່ງອັດຕາການເຕີບໂຕ ຂອງປະຊາກອນ ແລະ ຄົວເຮືອນ ຈາກແຫຼ່ງຂໍ້ມູນຂອງສູນສະຖິຕິປະຈຳ ແຂວງສະຫວັນນະເຂດ ໂດຍກຳນົດເອົາ 4 ຊ່ວງໄລຍະຂອງການເຕີບໂຕ ຄື: 2005, 2010, 2015 ແລະ 2020. (ສູນສະຖິຕິປະຈຳແຂວງສະຫວັນນະເຂດ, 2020)

ກຸ່ມຕົວຢ່າງທາງດ້ານເສດຖະກິດ: ການເຕີບເຕີບທາງດ້ານເສດຖະກິດຂອງຕົວເມືອງ ໂດຍຈະເບິ່ງຈາກ ຕົວເລກການເຕີບໂຕ GDP ຕໍ່ຫົວຄົນ (USD), ຕົວເລກການເຕີບໂຕຂອງເສດຖະກິດ GDP (% ຕໍ່ປີ) ແລະ ຕົວເລກການເຕີບໂຕຂອງເສດຖະກິດຂອງຂະແໜງການ ຈາກຂໍ້ມູນບົດລາຍງານແຜນພັດທະນາເສດຖະກິດ – ສັງຄົມ ແຕ່ລະໄລຍະ ຂອງນະຄອນໄກສອນພົມວິຫານ ຈາກຫ້ອງການແຜນການ ແລະ ການລົງທຶນ ນະຄອນໄກສອນພົມວິຫານ ໂດຍເບິ່ງການອັດຕາເຕີບໂຕທາງດ້ານເສດຖະກິດ 4 ໄລຍະຄື: 2005, 2010, 2015 ແລະ 2020 (ຫ້ອງການແຜນການ ແລະ ການລົງທຶນນະຄອນໄກສອນພົມວິຫານ, 2005, 2010, 2015, 2020). (ນະຄອນໄກສອນພົມວິຫານ, 2001-2005)

ກຸ່ມຕົວຢ່າງທາງດ້ານພື້ນທີ່: ການເຕີບເຕີບທາງດ້ານພື້ນທີ່ຂອງຕົວເມືອງ ໂດຍຈະເບິ່ງຈາກການເຕີບໂຕທາງດ້ານຈຳນວນສິ່ງປຸກສ້າງອາຄານ, ເນື້ອທີ່ປຸກສ້າງອາຄານ 4 ໄລຍະຄື: 2005, 2010, 2015 ແລະ 2020 ໂດຍນຳໃຊ້ແຫຼ່ງຂໍ້ມູນ Google Earth ເພື່ອເບິ່ງການເຕີບໂຕທາງດ້ານກາຍຍະພາບເມືອງ.

## 2.3 ຂໍ້ມູນທີ່ໃຊ້ໃນການຄົ້ນຄວ້າ

ການຄົ້ນຄວ້າໃນຄັ້ງນີ້ຄະນະຜູ້ວິໄຈໄດ້ນຳໃຊ້ຂໍ້ມູນມາຈາກ 2 ພາກສ່ວນ: ຂໍ້ມູນອັນດັບສອງ (Secondary Data) ແລະ ຂໍ້ມູນອັນດັບໜຶ່ງ (Primary Data) ດັ່ງລຸ່ມນີ້:

ຂໍ້ມູນອັນດັບສອງ (Secondary Data): ແມ່ນຂໍ້ມູນທາງດ້ານສະຖິຕິປະຊາກອນ ແລະ ຄົວເຮືອນ, ເສດຖະກິດ ແລະ ແຜນນະໂຍບາຍ, ຍຸດທະສາດການພັດທະນາ, ການລົງທຶນ, ອຸດສາຫະກຳ ແລະ ການຄ້າ, ສະຖິຕິນັກທ່ອງທ່ຽວ ແລະ ສະຖານທີ່ທ່ອງທ່ຽວ 4 ຊ່ວງໄລຍະ ຄື: 2005, 2010, 2015 ແລະ 2020.

ຂໍ້ມູນອັນດັບໜຶ່ງ (Primary Data): ທີ່ຕັ້ງ, ຂອບເຂດການປຸກສ້າງອາຄານ, ເນື້ອທີ່ອາຄານ ແລະ ຈຳນວນສິ່ງປຸກສ້າງ 4 ຊ່ວງໄລຍະ ຄື: 2005, 2010, 2015 ແລະ 2020.

## 2.4. ການວິເຄາະຂໍ້ມູນ

ຕົວຊີ້ວັດໃນການວິເຄາະການເຕີບໂຕຂອງຕົວເມືອງມີຢູ່ 3 ຕົວຊີ້ວັດຄື: ການເຕີບໂຕທາງດ້ານປະຊາກອນ, ການເຕີບໂຕທາງດ້ານເສດຖະກິດ ແລະ ການເຕີບໂຕທາງດ້ານພື້ນທີ່ (Cheng, 2003). ນອກຈາກນັ້ນ, ຍັງໄດ້ເບິ່ງຄວາມສຳພັນຂອງທີ່ກ່ຽວຂ້ອງ ແລະ ການເຕີບໂຕຂອງຕົວເມືອງ.

1) ສູດຄິດໄລ່ ອັດຕາການເພີ່ມຂຶ້ນຂອງປະຊາກອນ ແລະ ຄົວເຮືອນ ແມ່ນໄດ້ນຳໃຊ້ສູດ (Spoorenberg, 2015) ດັ່ງລຸ່ມນີ້:

$$a = \frac{(P_t - P_O)X100}{P_O X n}$$

$P_t$ ຈຳນວນປະຊາກອນປີຫຼ້າສຸດ ຫຼື ຄົວເຮືອນ

$P_o$ ຈຳນວນປະຊາກອນປີກ່ອນ ຫຼື ຄົວເຮືອນ

a ອັດຕາການເພີ່ມຂຶ້ນຂອງປະຊາກອນ ຫຼື ຄົວເຮືອນ

n ຈຳນວນປີ

2) ການວິເຄາະການເຕີບໂຕທາງດ້ານເສດຖະກິດ 4 ໄລຍະຄື: 2005, 2010, 2015 ແລະ 2020 ເພື່ອເບິ່ງການເຕີບໂຕທາງດ້ານເສດຖະກິດໃນຕົວເມືອງນະຄອນໄກສອນ ພົມວິຫານ ໂດຍວິເຄາະຈາກ 3 ດ້ານຄື: ຕົວເລກອັດຕາການເຕີບໂຕ GDP ຕໍ່ຫົວຄົນ (USD), ຕົວເລກການເຕີບໂຕຂອງເສດຖະກິດ GDP (% ຕໍ່ປີ) ແລະ ຕົວເລກການເຕີບໂຕຂອງເສດຖະກິດຂອງຂະແໜງການ (Helliwell & Putnam, 1995; Holden, 2003).

3) ການວິເຄາະທາງດ້ານພື້ນທີ່ຕົວເມືອງ ແມ່ນຈະເບິ່ງອັດຕາການຂະຫຍາຍຕົວເມືອງ ແລະ ປະເພດຂອງການຂະຫຍາຍຕົວເມືອງ ດັ່ງລຸ່ມນີ້:

- **ສູດຄິດໄລ່ອັດຕາການຂະຫຍາຍຕົວຂອງຕົວເມືອງ**

ວິທີການສຶກສາແມ່ນຈະນຳໃຊ້ສອງຕົວຊີ້ວັດ ການຂະຫຍາຍຕົວປະຈຳປີ (AE, km2) ແລະ ອັດຕາການເຕີບໂຕ ປະຈຳປີ (AGR, %) ເຊິ່ງໄດ້ຖືກເລືອກເປັນອັດຕາການຂະຫຍາຕົວເມືອງ, ເຊິ່ງຕົວຊີ້ວັດເຫຼົ່ານີ້ແມ່ນຈະນຳໃຊ້ດັ່ງລຸ່ມນີ້:

$$AE = \frac{A_{end} - A_{start}}{d} \quad (1)$$

$$AGR = 100 \times \left[ \left( \frac{A_{end}}{A_{start}} \right)^{1/d} - 1 \right] \quad (2)$$

ໂດຍເລີ່ມຕົ້ນແມ່ນ Astart ແລະ Aend ເປັນພື້ນທີ່ຂອບເຂດເມືອງທີ່ຈຸດເລີ່ມຕົ້ນ ແລະ ຈຸດສິ້ນສຸດຕາມລຳດັບ ແລະ d ຄືຊ່ວງເວລາຕັ້ງແຕ່ຕົ້ນຈົນຈົບ ວັດການປ່ຽນແປງປະຈຳປີຂອງທີ່ດິນໃນເມືອງໂດຍກົງພື້ນທີ່, ໃນຂະນະທີ່ AGR ຈະວັດຜົນກະທົບດ້ານຂະໜາດຂອງເມືອງ ແລະ ໃຊ້ເພື່ອປຽບທຽບການຂະຫຍາຍຕົວ ຂອງເມືອງລະຫວ່າງເມືອງຕ່າງໆ ໃນຊ່ວງເວລາດຽວກັນ (Wu et al., 2015).

- **ປະເພດການຂະຫຍາຍຕົວຂອງຕົວເມືອງ**

ປະເພດຂອງການເຕີບໂຕໃນເມືອງສະຫຼຸບໄດ້ເປັນ 3 ຮູບແບບໄດ້ແກ່ ການຂະຫຍາຍແບບເກົ່າ, ການຂະຫຍາຍແບບຂອບ ແລະ ການຂະຫຍາຍແບບກະໂດດຂ້າມ (Camagni et al., 2002). ປະເພດການເຕີບໂຕຂອງເມືອງ (E) ຄຳນວນໂດຍໃຊ້ສົມມຸດຖານ (Xu et al., 2007) ດັ່ງຕໍ່ໄປນີ້:

$$E = \frac{L_{com}}{P_{new}} \quad (3)$$

ໂດຍທີ່ $P_{new}$ ສະແດງເຖິງຂອບເຂດຂອງພື້ນທີ່ເຂດເມືອງທີ່ພັດທະນາຂຶ້ນມາໃໝ່ ແລະ $L_{com}$ ຄືຄວາມຍາວຂອງຂອບເຂດຮ່ວມຂອງພື້ນທີ່ເຂດເມືອງທີ່ພັດທະນາຂຶ້ນໃໝ່ນີ້ ແລະ ທີ່ດິນໃນເມືອງທີ່ມີຢູ່ ປະເພດການເຕີບໂຕ ໃນເມືອງຈະຖືກລະບຸວ່າເປັນການເພີ່ມເມື່ອ $E > 0.5$ ເປັນການຂະຫຍາຍຂອງເມື່ອ $0 < E \leq 0.5$ ແລະ ເປັນການກະໂດດຂ້າມເມື່ອ $E = 0$.

**4) Matrix ຄວາມສຳພັນຂອງທີ່ກ່ຽວຂ້ອງ ແລະ ການເຕີບໂຕຂອງຕົວເມືອງ** ປະກອບດ້ວຍ ແຮງຂັບເຄື່ອນທາງດ້ານທີ່ຕັ້ງ, ແຮງຂັບເຄື່ອນທາງດ້ານຍຸດທະສາດ ການພັດທະນາ, ແຮງຂັບເຄື່ອນທາງດ້ານທາງໂຄງລ່າງພື້ນຖານ, ແຮງຂັບເຄື່ອນທາງດ້ານການລົງທຶນ, ແຮງຂັບເຄື່ອນທາງດ້ານອຸດສາຫະກຳ ແລະ ການຄ້າ, ແຮງຂັບເຄື່ອນທາງດ້ານການທ່ອງທ່ຽວ (Azarm et al., 2019). ທັງໝົດນີ້ ແມ່ນຄວາມສຳພັນທີ່ກ່ຽວຂ້ອງກັບການເຕີບໂຕຂອງຕົວເມືອງ.

## 3. ຜົນໄດ້ຮັບ

### 3.1 ການເຕີບໂຕທາງດ້ານກາຍະພາບຂອງຕົວເມືອງ

#### 3.1.1 ການເຕີບໂຕດ້ານປະຊາກອນ

ຈາກການວິເຄາະຂໍ້ມູນການເຕີບໂຕປະຊາກອນໃນຕົວເມືອງ ນະຄອນໄກສອນພົມວິຫານ ໃນໄລຍະປີ 2005 ເຫັນວ່າ ມີຈຳນວນປະຊາກອນ 112,915 ຄົນ, ປີ 2010 ມີຈຳນວນ 121,861 ຄົນ ທຽບໃສ່ປີ 2005 ແມ່ນມີຈຳນວນເພີ່ມຂຶ້ນ 8,926 ຄົນ ຄິດເປັນ 7.34 ສ່ວນຮ້ອຍ, ໃນປີ 2015 ມີຈຳນວນປະຊາກອນ 125,622 ຄົນ ທຽບໃສ່ປີ 2010 ແມ່ນເພີ່ມຂຶ້ນ 3,761 ຄົນ ຄິດເປັນ 2.99 ສ່ວນຮ້ອຍ , ໃນປີ 2020 ມີຈຳນວນປະຊາກອນ 178,893 ຄົນ ທຽບໃສ່ປີ 2015 ແມ່ນເພີ່ມຂຶ້ນ 53,271 ຄົນ ຄິດເປັນ 29.77 ສ່ວນຮ້ອຍ.

ນອກຈາກນັ້ນ, ຈຳນວນຄອບຄົວໃນຕົວເມືອງ ນະຄອນໄກສອນພົມວິຫານ ໃນໄລຍະແຕ່ປີ 2005 ມີຈຳນວນ 19,001 ຄົວເຮືອນ, ປີ 2010 ມີຈຳນວນ 19,423 ຄົວເຮືອນ, ປີ 2015 ມີຈຳນວນ 21,475 ຄົວເຮືອນ ແລະ ໃນປີ 2020 ມີຈຳນວນ 20,871 ຄົວເຮືອນ, ດັ່ງໃນຕາຕະລາງ 1.

#### 3.1.2 ການເຕີບໂຕທາງດ້ານເສດຖະກິດ

**ຕົວເລກເສດຖະກິດອັດຕາການເຕີບໂຕ GDP ຕໍ່ຫົວຄົນ (USD)**: ຕັ້ງແຕ່ປີ 2005 ຈະເຫັນໄດ້ວ່າມີອັດຕາການເຕີບໂຕ 608 ໂດລາຕໍ່ຄົນຕໍ່ປີ, ປີ 2010 ແມ່ນມີອັດຕາ

ການເຕີບໂຕ 1,116 ໂດລາຕໍ່ຄົນຕໍ່ປີ ທຽບກັບປີ 2005 ເພີ່ມຂຶ້ນ 508 ໂດລາ ຄິດເປັນ 45.51 ສ່ວນຮ້ອຍ, ໃນປີ 2015 ມີອັດຕາການເຕີບໂຕ 1,627 ໂດລາຕໍ່ຄົນຕໍ່ປີ ທຽບກັບປີ 2010 ເພີ່ມຂຶ້ນ 31.40 ສ່ວນຮ້ອຍ, ໃນປີ 2020 ມີອັດຕາການເຕີບໂຕ 2,466 ໂດລາຕໍ່ຄົນຕໍ່ປີ ທຽບໃສ່ປີ 2015 ເພີ່ມຂຶ້ນ 34.02 ສ່ວນຮ້ອຍ.

**ຕົວເລກການເຕີບໂຕຂອງເສດຖະກິດ GDP (% ຕໍ່ປີ)**: ຕັ້ງແຕ່ປີ 2005 ຈະເຫັນໄດ້ວ່າມີອັດຕາການຂະຫຍາຍຕົວຂອງເສດຖະກິດແມ່ນ 7.5 ສ່ວນຮ້ອຍ, ປີ 2010 ແມ່ນມີອັດຕາການຂະຫຍາຍຕົວຂອງເສດຖະກິດແມ່ນ 9.82 ສ່ວນຮ້ອຍ ທຽບກັບປີ 2005 ເພີ່ມຂຶ້ນ 2.32 ສ່ວນຮ້ອຍ, ໃນປີ 2015 ມີອັດຕາການຂະຫຍາຍຕົວຂອງເສດຖະກິດແມ່ນ 10.89 ສ່ວນຮ້ອຍ ທຽບກັບປີ 2010 ເພີ່ມຂຶ້ນ 1.07 ສ່ວນຮ້ອຍ, ໃນປີ 2020 ມີອັດຕາການຂະຫຍາຍຕົວຂອງເສດຖະກິດແມ່ນ 9.05 ສ່ວນຮ້ອຍ ທຽບໃສ່ປີ 2015 ຫຼຸດລົງ 1.84 ສ່ວນຮ້ອຍ.

**ຕົວເລກການເຕີບໂຕຂອງເສດຖະກິດຂອງຂະແໜງການ**: ຕັ້ງແຕ່ປີ 2005 ຈະເຫັນໄດ້ວ່າມີອັດຕາການການເຕີບໂຕຂະແໜງກະສິກຳ-ປ່າໄມ້ 20.9 ສ່ວນຮ້ອຍ, ຂະແໜງອຸດສາຫະກຳ, ການຄ້າ ແລະ ຫັດຖະກຳ 30.8 ສ່ວນຮ້ອຍ, ຂະແໜງບໍລິການ 48.2 ສ່ວນຮ້ອຍ, ໃນປີ 2010 ອັດຕາການການເຕີບໂຕຂະແໜງກະສິກຳ-ປ່າໄມ້ 20.3 ສ່ວນຮ້ອຍ, ຂະແໜງອຸດສາຫະກຳ, ການຄ້າ ແລະ ຫັດຖະກຳ 32.9 ສ່ວນຮ້ອຍ, ຂະແໜງບໍລິການ 46.6 ສ່ວນຮ້ອຍ, ໃນປີ 2015 ອັດຕາການການເຕີບໂຕຂະແໜງກະສິກຳ-ປ່າໄມ້ 17.14 ສ່ວນຮ້ອຍ, ຂະແໜງອຸດສາຫະກຳ, ການຄ້າ ແລະ ຫັດຖະກຳ 51.75 ສ່ວນຮ້ອຍ, ຂະແໜງບໍລິການ 31.11 ສ່ວນຮ້ອຍ, ໃນປີ 2020 ອັດຕາການການເຕີບໂຕຂະແໜງກະສິກຳ-ປ່າໄມ້ 13.4 ສ່ວນຮ້ອຍ, ຂະແໜງອຸດສາຫະກຳ, ການຄ້າ ແລະ ຫັດຖະກຳ 58.73 ສ່ວນຮ້ອຍ, ຂະແໜງບໍລິການ 27.87 ສ່ວນຮ້ອຍ.

### 3.1.3 ການເຕີບໂຕທາງພື້ນທີ່ຕົວເມືອງ

**ການເຕີບໂຕທາງດ້ານເນື້ອທີ່ອາຄານຂອງນະຄອນໄກສອນພົມວິຫານ:** ຈາກການສຳຫຼວດຈາກພາບທາງອາກາດ ຈະເຫັນໄດ້ວ່າ ໃນປີ 2005 ມີເນື້ອທີ່ອາຄານທັງໝົດແມ່ນ 432 ເຮັກຕາ, ໃນປີ 2010 ມີເນື້ອທີ່ອາຄານ 633 ເຮັກຕາ ທຽບໃສ່ປີ 2005 ແມ່ນເພີ່ມຂຶ້ນ 201 ເຮັກຕາ ຄິດເປັນ 31.75 ສ່ວນຮ້ອຍ, ໃນປີ 2015 ມີເນື້ອທີ່ອາຄານ 724 ເຮັກຕາ ທຽບໃສ່ປີ 2010 ແມ່ນເພີ່ມຂຶ້ນ 91 ເຮັກຕາ ຄິດເປັນ 12.56 ສ່ວນຮ້ອຍ, ໃນປີ 2020 ມີເນື້ອທີ່ອາຄານ 865 ເຮັກຕາ ທຽບໃສ່ປີ 2015 ແມ່ນເພີ່ມຂຶ້ນ 141 ເຮັກຕາ ຄິດເປັນ 16.30 ສ່ວນຮ້ອຍ. (ຮູບທີ 1)

ການເຕີບໂຕທາງດ້ານຈຳນວນສິ່ງປຸກສ້າງ ໃນປີ 2005 ແມ່ນມີຈຳນວນ 18,392 ຫຼັງ, ປີ 2010 ແມ່ນມີຈຳນວນ 24,028 ຫຼັງ ທຽບກັບປີ 2005 ເພີ່ມຂຶ້ນ 31.54 ສ່ວນຮ້ອຍ, ປີ 2015 ແມ່ນມີຈຳນວນ 30,870 ຫຼັງທຽບກັບປີ 2010 ເພີ່ມຂຶ້ນ 18.62 ສ່ວນຮ້ອຍ ແລະ ປີ 2020 ແມ່ນມີຈຳນວນ 34,031 ຫຼັງ ທຽບກັບປີ 2015 ເພີ່ມຂຶ້ນ 15.77 ສ່ວນຮ້ອຍ.

ຕົວເມືອງນະຄອນໄກສອນ ໃນປີ 2005 ແມ່ນມີຈຳນວນ 18,090 ຫຼັງເຮືອນ, ປີ 2010 ແມ່ນມີຈຳນວນ 20,123 ຫຼັງເຮືອນ ທຽບກັບປີ 2005 ເພີ່ມຂຶ້ນ 10.10 ສ່ວນຮ້ອຍ, ປີ 2015 ແມ່ນມີຈຳນວນ 22,019 ຫຼັງເຮືອນ ທຽບກັບປີ 2010 ເພີ່ມຂຶ້ນ 8.61 ສ່ວນຮ້ອຍ ແລະ ປີ 2020 ແມ່ນມີຈຳນວນ 23,106 ຫຼັງເຮືອນ ທຽບກັບປີ 2015 ເພີ່ມຂຶ້ນ 4.70 ສ່ວນຮ້ອຍ, ດັ່ງໃນຕາຕະລາງ 2, 3.

ຈາກການສຶກສາພື້ນທີ່ຂອບເຂດເທສະບານຕົວເມືອງນະຄອນໄກສອນພົມວິຫານ ກວມເອົາ 36 ບ້ານມີເນື້ອທີ່ທັງໝົດແມ່ນ 15,976 ເຮັກຕາ, ໃນນັ້ນ ປີ 2005 ມີຈຳນວນເນື້ອທີ່ອາຄານແມ່ນ 332 ເຮັກຕາ, ໃນປີ 2010 ມີເນື້ອນທີ່ອາຄານ 509 ເຮັກຕາ, ຖ້າທຽບໃສ່ປີ 2005 ແມ່ນເພີ່ມຂຶ້ນ 117 ເຮັກຕາ ຄິດເປັນ 34.77 ສ່ວນຮ້ອຍ, ໃນປີ 2015 ມີເນື້ອທີ່ອາຄານ 575 ເຮັກຕາ ເພີ່ມຂຶ້ນ 63 ເຮັກຕາ ຄິດເປັນ 11.01 ສ່ວນຮ້ອຍ, ໃນປີ 2020 ມີເນື້ອທີ່ອາຄານ 691 ເຮັກຕາ ເພີ່ມຂຶ້ນ 119 ເຮັກຕາ ຄິດເປັນ 17.22 ສ່ວນຮ້ອຍ (ຮູບທີ 2).

ນອກຈາກນັ້ນ, ຈຳນວນສິ່ງປຸກສ້າງໃນປີ 2005 ແມ່ນມີຈຳນວນ 13,693 ຫຼັງ, ໃນປີ 2010 ແມ່ນມີຈຳນວນ 21,342 ຫຼັງ ຖ້າທຽບໃສ່ປີ 2005 ແມ່ນເພີ່ມຂຶ້ນ 7,649 ຫຼັງ ຄິດເປັນ 35.84 ສ່ວນຮ້ອຍ, ໃນປີ 2015 ມີຈຳນວນ 24,089 ຫຼັງ ຖ້າທຽບໃສ່ປີ 2010 ເພີ່ມຂຶ້ນ 2,756 ຫຼັງ ຄິດເປັນ 11.43 ສ່ວນຮ້ອຍ, ໃນປີ 2020 ມີຈຳນວນ 29,335 ຫຼັງ ຖ້າທຽບໃສ່ປີ 2015 ເພີ່ມຂຶ້ນ 5,237 ຫຼັງ ຖ້າທຽບໃສ່ປີ 2015 ເພີ່ມຂຶ້ນ 5,237 ຫຼັງ ຄິດເປັນ 17.85 ສ່ວນຮ້ອຍ, ດັ່ງໃນຕາຕະລາງ 4 ແລະ 5.

### 3.2 ແຮງຂັບເຄື່ອນ ແລະ ປັດໄຈທີ່ສົ່ງຜົນຕໍ່ການເຕີບໂຕຂອງເມືອງ

#### 3.2.1 ປັດໄຈທາງດ້ານທີ່ຕັ້ງ

ຈາກການສຶກສາທີ່ຕັ້ງຂອງຕົວເມືອງນະຄອນໄກສອນພົມວິຫານມີທີ່ຕັ້ງພູມສາດເປັນນະຄອນແຫ່ງໜຶ່ງທີ່ນອນໃນເຫດສະບານຂອງແຂວງ, ມີສໍານັກງານອົງການປົກຄອງແຂວງຕັ້ງຢູ່, ມີທາງເຊື່ອມໂຍງກັບແລວທາງເສດຖະກິດຕັດຜ່ານຕົວເມືອງຄື:

- ມີແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ (EWEC) ໂດຍຜ່ານຈາກເສັ້ນທາງເລກ9ຈາກຕົວເມືອງດານັງ, ດົງຮ່າ, ຜ່ານດ່ານຊາຍແດນແດນສະຫວັນຜ່ານຕົວເມືອງນະຄອນໄກສອນພົມວິຫານອອກໄປສູ່ຂົວຂ້າມນໍ້າຂອງສະຫວັນນະເຂດຫາມຸກດາຫານແລ້ວໄປຫາຕົວເມືອງຂອນແກ່ນປະເທດໄທອອກໄປສູ່ຕົວເມືອງຢາງກຸງປະເທດພະມ້າ.

- ມີແລວທາງເສດຖະກິດເລກທີ 13 ເໜືອຈາກເສັ້ນທາງນະຄອນຫຼວງວຽງຈັນຜ່ານຕົວເມືອງບໍລິຄໍາໄຊ, ຕົວເມືອງທ່າແຂກ, ຜ່ານຕົວເມືອງນະຄອນໄກສອນພົມວິຫານລົງໄປຫາຕົວເມືອງປາກເຊ ເຊື່ອມໂຍງອອກໄປສູ່ກໍາປູເຈຍ.

- ຕົວເມືອງໄກສອນພົມວິຫານ ມີເຂດເສດຖະກິດພິເສດສະຫວັນ - ເຊໂນ, ມີຂົວຂ້າມແມ່ນໍ້າຂອງ ເຊິ່ງເປັນທ່າແຮງໃນພັດທະນາເສດຖະກິດຂອງເມືອງ.

- ຕົວເມືອງນະຄອນໄກສອນພົມວິຫານ ມີສະຖານທີ່ແຫຼ່ງທ່ອງທ່ຽວທີ່ສໍາຄັນຫຼາຍແຮງ ທີ່ເປັນການດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ.

#### 3.2.2 ປັດໄຈທາງດ້ານນະໂຍບາຍ, ຍຸດທະສາດ ແລະ ການວາງແຜນຕົວເມືອງ

ຕົວເມືອງນະຄອນໄກສອນພົມວິຫານ, ເຊິ່ງຈະເຫັນໄດ້ວ່າ ມີການກໍານົດຍຸດທະສາດຂອງການພັດທະນາໃນຊ່ວງໄລຍະປີ 2020 ຫາ 2024 ຂອງທີ່ໄດ້ມີການກໍານົດຍຸດທະສາດ ແລະ ຈຸດສຸມຂອງການພັດທະນາຕົວເມືອງໄກສອນພົມວິຫານ ຮອບປີ 2035 ແມ່ນ: ສ້າງຕົວເມືອງນະຄອນໄກສອນພົມວິຫານ ກາຍເປັນສູນກາງທາງດ້ານການຄ້າ, ການບໍລິການ, ການລົງທຶນ ແລະ ການທ່ອງທ່ຽວ ແລະ ສ້າງຕົວເມືອງນະຄອນໄກສອນພົມວິຫານໃຫ້ເປັນນະຄອນທີ່ມີຄວາມສະຫງົບສະອາດ, ມີສະເໜ່ ແລະ ສີວິໄລຕາມເນື້ອໃນສ້າງນະຄອນ 6 ສ (ສ ສະຫງົບ, ສ ສະອາດ, ສ ສະຫວ່າງ, ສ ສະ ເໜ່, ສ ສີຂຽວ ແລະ ສ ສີວິໄລ) ແລະ ທິດທາງລວມຍຸດທະສາດຮອດປີ 2030: ສ້າງເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ, ໜັກແໜ້ນ ແລະຍືນຍົງ.

#### 3.2.3 ປັດໄຈທາງດ້ານການລົງທຶນ

ຈາກການວິເຄາະຂໍ້ມູນເຫັນວ່າໃນຊ່ວງໄລຍະປີ 2001-2005 ການລົງທຶນມີຢູ່ສອງພາກສ່ວນຄື: ການລົງທຶນຂອງພາກລັດມີອັດຕາສ່ວນ 82.24 ສ່ວນຮ້ອຍ ແລະ ການລົງທຶນຂອງປະຊາຊົນ ມີອັດຕາສ່ວນ 17.76 ສ່ວນຮ້ອຍ, ໃນຊ່ວງໄລຍະ 2010-2015 ຈະມີການລົງທຶນຢູ່ສາມພາກສ່ວນຫຼັກຄື: ການລົງທຶນພາກລັດ ມີອັດຕາສ່ວນ 96.63 ສ່ວນຮ້ອຍ, ການລົງທຶນຂອງປະຊາຊົນ ມີອັດຕາສ່ວນ 0.66 ສ່ວນຮ້ອຍ ແລະ ການລົງທຶນ ທຶນຊ່ວຍເຫຼືອລ້າ-ກູ້ຢືມ ມີອັດຕາສ່ວນ 2.70 ສ່ວນຮ້ອຍ, ຊ່ວງໄລຍະ 2015-2020 ຈະມີການລົງທຶນຢູ່ຫ້າພາກສ່ວນຫຼັກຄື: ໂຄງການລົງທຶນຂອງລັດ ມີອັດຕາສ່ວນ 3.71 ສ່ວນຮ້ອຍ, ທຶນຂອງປະຊາຊົນ ມີອັດຕາສ່ວນ 0.82 ສ່ວນຮ້ອຍ, ການລົງທຶນຂອງເອກະຊົນພາຍໃນ ແລະຕ່າງປະເທດ ມີອັດຕາສ່ວນ 46.81 ສ່ວນຮ້ອຍ, ທຶນຊ່ວຍເຫຼືອລ້າ-ກູ້ຢືມ ມີອັດຕາສ່ວນ 3.20 ສ່ວນຮ້ອຍ ແລະ ສິນເຊື່ອທະນາຄານ ແລະ ຊຸມຊົນ ມີອັດຕາສ່ວນ 45.43 ສ່ວນຮ້ອຍ.

#### 3.2.4 ປັດໄຈທາງດ້ານການລົງທຶນພັດທະນາພື້ນຖານໂຄງລ່າງຕົວເມືອງ

ຈາກການວິເຄາະຂໍ້ມູນປັດໄຈທາງດ້ານການລົງທຶນພັດທະນາພື້ນຖານໂຄງລ່າງຕົວເມືອງ ເຫັນວ່າ ໃນຊ່ວງໄລຍະ ປີ 2001-2005 ແມ່ນມີການລົງທຶນ 48.74 ຕື້ກີບ, ໃນຊ່ວງໄລຍະ 2010-2015 ແມ່ນມີການລົງທຶນ 100.99 ຕື້ກີບ ແລະ ໃນຊ່ວງໄລຍະ 2015-2020 ມີການລົງທຶນແມ່ນ 84.768 ຕື້ກີບ.

#### 3.2.5 ປັດໄຈທາງດ້ານອຸດສາຫະກໍາ ແລະ ການຄ້າ

ຈາກການວິເຄາະຂໍ້ມູນປັດໄຈທາງດ້ານອຸດສາຫະກໍາ ແລະ ການຄ້າ ນະຄອນໄກສອນພົມວິຫານ ໃນໄລຍະປີ 2005-2020 ເຫັນໄດ້ວ່າມີການເຕີບໂຕ ແລະ ມີການລົງທຶນໃສ່ຂະແໜງອຸດສາຫະກໍາ ແລະ ການຄ້າເພີ່ມຂຶ້ນເລື້ອຍໆ ເຊິ່ງຈະແດງອອກໃຫ້ເຫັນປີ 2005 ມີຈໍານວນໂຮງຈັກໂຮງງານ 381 ແຫ່ງ, ປີ 2010 ມີຈໍານວນ 499 ແຫ່ງ ຖ້າທຽບໃສ່ປີ 2005 ແມ່ນເພີ່ມຂຶ້ນ 23.64 ສ່ວນຮ້ອຍ, ໃນປີ 2015 ມີຈໍານວນ 516 ແຫ່ງ ຖ້າທຽບໃສ່ປີ 2010 ແມ່ນເພີ່ມຂຶ້ນ 3.29 ສ່ວນຮ້ອຍ ແລະ ໃນປີ 2020 ມີຈໍານວນ

543 ແຫ່ງຖ້າທຽບໃສ່ປີ 2015 ແມ່ນເພີ່ມຂຶ້ນ 4.97 ສ່ວນຮ້ອຍ.

### 3.2.6 ປັດໄຈທາງດ້ານການທ່ອງທ່ຽວ

ຈາກການວິເຄາະຂໍ້ມູນປັດໄຈທາງດ້ານການທ່ອງທ່ຽວ ນະຄອນໄກສອນພົມວິຫານ ຈະເຫັນໄດ້ວ່າຈຳນວນສະຖານທີ່ພັກໂຮງແຮມ, ເຮືອນພັກ ແລະ ເຮືອນເຊົ່າແມ່ນມີຈຳນວນເພີ່ມຂຶ້ນເລື້ອຍໆ ເຊິ່ງສະແດງອອກໃຫ້ເຫັນວ່າໃນປີ 2015 ໂຮງແຮມມີອັດຕາສ່ວນ 4.26 ສ່ວນຮ້ອຍ, ເຮືອນພັກ ມີອັດຕາສ່ວນ 24.62 ສ່ວນຮ້ອຍ, ເຮືອນເຊົ່າມີອັດຕາສ່ວນ 76.83 ສ່ວນຮ້ອຍ ແລະ ໃນປີ 2020 ໂຮງແຮມມີອັດຕາສ່ວນ 5.30 ສ່ວນຮ້ອຍ, ເຮືອນພັກ ມີອັດຕາສ່ວນ 12.24 ສ່ວນຮ້ອຍ, ເຮືອນເຊົ່າ ມີອັດຕາສ່ວນ 84.35 ສ່ວນຮ້ອຍ.

## 4. ວິພາກຜົນ

ໃນການສຶກສາການເຕີບໂຕ, ການປ່ຽນແປງ ແລະ ແຮງຂັບເຄື່ອນໃນການພັດທະນາຂອງຕົວເມືອງໄກສອນພົມວິຫານ ເຫັນວ່າການເຕີບໂຕທາງດ້ານປະຊາກອນໃນຕົວເມືອງນະຄອນໄກສອນພົມວິຫານ ແຕ່ປີ 2005 - 2020 ໃນຊ່ວງໄລຍະ 15 ປີ ຂອງການພັດທະນາຕົວເມືອງນະຄອນໄກສອນພົມວິຫານ ອັດຕາການເຕີບໂຕທາງດ້ານປະຊາ ກອນ 36.88 ສ່ວນຮ້ອຍ ຖ້າເຮົາສະເລ່ຍອັດການເຕີບໂຕ 2.46 ສ່ວນຮ້ອຍຕໍ່ປີ ແລະ ການເຕີບໂຕຈຳນວນຄົວເຮືອນແມ່ນ 35.45 ສ່ວນຮ້ອຍ ຖ້າເຮົາສະເລ່ຍຕໍ່ປີແລ້ວ 2.36 ສ່ວນຮ້ອຍຕໍ່ປີ; ເມື່ອທຽບໃສ່ຜົນຂອງການສຶກສາ (Japan International Cooperation Agency, 2010) ສຶກສາຍຸດທະສາດການພັດທະນາຕົວເມືອງຫຼັກລະດັບພູມີພາກໃນ ສປປ ລາວ ໂດຍສະເພາະແມ່ນຕົວເມືອງນະຄອນໄກສອນພົມວິຫານ ກໍ່ເປັນຕົວເມືອງຫຼັກໜຶ່ງຢູ່ທາງພາກໃຕ້ ຂອງ ສປປລາວ ໂດຍການສຶກສາເຫັນວ່າເປັນຕົວເມືອງໜຶ່ງທີ່ມີປະຊາກອນອາໄສຢູ່ຫຼາຍ ແລະ ມີຄວາມໜາແໜ້ນສູງ, ຜົນຂອງການສຶກສາເຫັນໄດ້ວ່າ ຕົວເມືອງ ນະຄອນໄກສອນພົມ ວິຫານ ມີທ່າອຽງໃນການການເຕີບໂຕທາງດ້ານປະຊາກອນສູງໃນອະນາຄົດ.

ການເຕີບໂຕທາງດ້ານເສດຖະກິດ GDP ຕໍ່ຫົວຄົນ (USD) ແຕ່ປີ 2005 - 2020 ເຫັນວ່າ ໃນຊ່ວງໄລຍະ 15 ປີ GDP ຕໍ່ຫົວຄົນ (USD) ຈາກ 608 ໂດລາຕໍ່ຄົນຕໍ່ປີ ມາເປັນ 2,466 ໂດລາຕໍ່ຄົນຕໍ່ປີ ໃນປີ 2020; ການເຕີບໂຕຂອງ GDP (% ຕໍ່ປີ) ຈາກ 7.5 ສ່ວນຮ້ອຍມາເປັນ 9.05 ສ່ວນຮ້ອຍ; ນອກຈາກນັ້ນຍັງຖ້າເຮົາເບິ່ງການເຕີບໂຕຂອງຂະແໜງການ: ຂະແໜງປ່າໄມ້ ເຫັນວ່າ 20.9 ສ່ວນຮ້ອຍຫຼຸດລົງ ມາເປັນ 13.40 ສ່ວນຮ້ອຍ, ຂະແໜງອຸດສາຫະກຳ, ການຄ້າ ແລະ ຫັດຖະກຳ ຈາກ 30.8 ສ່ວນຮ້ອຍ ເພີ່ມຂຶ້ນເປັນ 58.73 ສ່ວນຮ້ອຍ, ຂະແໜງການບໍລິການ ຈາກ 48.2 ສ່ວນຮ້ອຍ ຫຼຸດລົງມາເປັນ 27.87 ສ່ວນຮ້ອຍ ເມື່ອທຽບຜົນຂອງຈາກການສຶກສາ Japan International Cooperation Agency (2012) ການພັດທະນາເສດຖະກິດເຂດພາກໃຕ້ ຂອງ ສປປ ລາວ ແລະ (Nolintha, 2011) ເມືອງ, ເຂດຖະກິດພິເສດ ແລະ ການເຊື່ອມໂຍງຂອງບັນດາຂອງແຂວງໃນ ສປປ ລາວ ເຫັນໄດ້ວ່າບັນດາຕົວເມືອງຫຼັກໃນເຂດພາກໃຕ້ຂອງ ສປປ ລາວ ເປັນຕົ້ນ ແມ່ນຕົວເມືອງ ນະຄອນໄກສອນພົມວິຫານ ແລະ ຕົວເມືອງນະຄອນປາກເຊ ມີຈຸດທີ່ຕັ້ງເຂດເສດຖະກິດທີ່ສຳຄັນຫຼາຍແຫ່ງເປັນຕົ້ນແມ່ນ ເຂດເສດຖະກິດພິເສດ, ການລົງທຶນທາງດ້ານອຸດສາຫະກຳ, ການລົງທຶນກໍ່ສ້າງພື້ນຖານໂຄງລ່າງ, ເຊິ່ງໄດ້ເປັນໂອກາດເຮັດໃຫ້ການເຕີບທາງດ້ານເສດຖະກິດຂອງຕົວເມືອງຈະມີອັດຕາການເຕີບໂຕໄວ ຜົນຈາກການສຶກສາເຫັນວ່າຕົວເມືອງນະຄອນໄກສອນພົມວິຫານ ຈາກໃນອະດີດແມ່ນອີງໃສ່ການເຕີບໂຕເສດຖະກິດທາງດ້ານຂະແໜງປ່າໄມ້ ແຕ່ມາໃນປັດຈຸບັນແມ່ນໄດ້ຫັນປ່ຽນມາເປັນຂະແໜງອຸດສາຫະກຳ, ການຄ້າ ແລະ ຫັດຖະກຳ ກວມເອົາອັດຕາສ່ວນຫຼາຍກວ່າໝູ່.

ການເຕີບໂຕທາງດ້ານພື້ນທີ່ຕົວເມືອງຈະເຫັນໄດ້ຈາກການເຕີບໂຕຂອງພື້ນທີ່ໃນແຂວງສະຫວັນນະເຂດຈາກເນື້ອທີ່ອາຄານ 432 ເຮັກຕາ ມາເປັນ 865 ເຮັກຕາ ໃນປີ 2020 ແລະ ໃນເຂດຕົວເມືອງນະຄອນໄກສອນພົມວິຫານ ເຫັນວ່າ ເນື້ອທີ່ອາຄານ 332 ເຮັກຕາ ມາເປັນ 691 ເຮັກຕາ ໃນປີ 2020 ເຊິ່ງເຫັນໄດ້ວ່າພື້ນທີ່ປຸກສ້າງອາຄານສ່ວນຫຼາຍແມ່ນລວມຕົວກັນຢູ່ເຂດໃຈກາງຕົວເມືອງ ກວມເອົາ 80 ສ່ວນຮ້ອຍ. ໃນນັ້ນເຫັນໄດ້ວ່າ ອັດຕາຂອງການເຕີບໂຕທາງດ້ານເນື້ອທີ່ຂອງອາຄານໃນເຂດຕົວເມືອງໃນຊ່ວງໄລຍະ 15 ປີ ມີອັດຕາການເຕີບໂຕສູງເຖິງ 51.95 ສ່ວນຮ້ອຍ, ນອກຈາກນັ້ນ, ດ້ານຈຳນວນສິ່ງປຸກສ້າງອາຄານ ຈາກ 13,693 ຫຼັງ ມາເປັນ 29,335 ຫຼັງ, ມີອັດຕາການເຕີບໂຕ 53.32 ສ່ວນຮ້ອຍ. ເມື່ອທຽບກັບການສຶກສາຂອງ Huang et al., (2017) ໄດ້ສຶກສາຮູບແບບຂອງການຂະຫຍາຍຕົວເມືອງຂອງຈີນໃນ 291 ຕົວເມືອງ, 1990-2015 ແລະ ການສຶກ

ສາຂອງ Mienmany, (2018) ໄດ້ວິເຄາະການນຳໃຊ້ທີ່ດິນ ແລະ ສິ່ງປົກຄຸ້ມທີ່ດິນ, ການປ່ຽນແປງແລະ ແຮງຂັບເຄື່ອນ ກໍລະນີສຶກສານະຄອນໄກສອນພົມວິຫານ ເຫັນວ່າຮູບແບບ ການຂະຫຍາຍຕົວເມືອງນະຄອນໄກສອນພົມວິຫານແມ່ນ ອັດການເຕີບໂຕຂະຫຍາຍແຜ່ອອກໄປ ໂດຍສະເພາະແມ່ນ ການຂະຫຍາຍຕົວເມືອງ ຫຼື ສິ່ງປຸກສ້າງຂອງອາຄານໄປຕາມ ແລວຂອງເສັ້ນທາງຄົມມະນາຄົມເປັນຫຼັກ ແລະ ອາຄານ ສ່ວນຫຼາຍແມ່ນຈະລວມຕົວຢູ່ທີ່ຕັ້ງຂອງກິດຈະການທີ່ສຳ ຄັນ ຜົນຂອງການສຶກສາການເຕີບໂຕທາງດ້ານພື້ນທີ່ຂອງ ຕົວເມືອງ ເຫັນວ່າໃນໄລຍະ 15 ປີທີ່ຜານມາແມ່ນມີອັດຕາ ການເຕີບໂຕໄວ. ນອກຈາກນັ້ນ, ປັດໄຈ ແລະ ແຮງຂັບ ເຄື່ອນໃນການພັດທະນາຕົວເມືອງ ນະຄອນໄກສອນພົມວິ ຫານ ເປັນຕົ້ນແມ່ນປັດໄຈທາງດ້ານທີ່ຕັ້ງ: ທຳເລທີ່ຕັ້ງຂອງ ເມືອງທີ່ມີແລວເສັ້ນທາງຜ່ານເສດຖະກິດຕາເວັນອອກ-ຕາເວັນຕົກ, ມີເສັ້ນທາງ 13 ເໜືອຜ່ານແຕ່ເໜືອຫາໃຕ້, ມີ ເຂດເສດຖະກິດພິເສດ ແລະ ມີຂົວຂ້າມແມ່ນ້ຳຂອງ, ຈາກ ການສຶກສາ (Asian Development Bank, 2012). ສິ່ງ ເຫຼົ່ານີ້ເປັນປັດໄຈເຮັດໃຫ້ຕົວເມືອງນະຄອນໄກສອນ ພົມວິຫານ ເປັນຈຸດຜ່ານແລວເສດຖະກິດ ຈຶ່ງເປັນຕົວເມືອງ ທີ່ມີນັກລົງທຶນເຂົ້າມາລົງທຶນຫຼາຍທາງດ້ານອຸດສາຫະກຳ, ການຄ້າ ແລະ ການທ່ອງທ່ຽວ, ປັດໄຈເຫຼົ່ານີ້ ຈຶ່ງພາໃຫ້ມີ ການເຕີບໂຕ, ການປ່ຽນແປງ ແລະ ແຮງຂັບເຄື່ອນໃນການ ພັດທະນາຕົວເມືອງໃນອະນາຄົດ.

## 5. ສະຫຼຸບ

ຈາກສຶກສາກ່ຽວກັບການເຕີບໂຕ, ການປ່ຽນແປງ ແລະ ແຮງຂັບເຄື່ອນໃນການພັດທະນາຂອງຕົວເມືອງ ນະຄອນໄກສອນພົມວິຫານ ຄວາມສາມາດບົ່ມຊ້ອນໃນ ການພັດທະນາຕົວເມືອງ ນະຄອນໄກສອນພົມວິຫານ ໃຫ້ ເປັນສູນຄົມມະຄົມຕົວເມືອງຕາມແລວເສດຖະກິດຕາເວັນ ອອກ-ຕາເວັນຕົກ, ມີທີ່ຕັ້ງເຂດເສດຖະກິດພິເສດສະຫວັນ ນະເຂດ-ເຊໂນ ແລະ ມີການລົງທຶນທາງດ້ານອຸດສາຫະກຳ ຫຼາກຫຼາຍ ຕາມແລວເສດຖະກິດ ແລະ ໃນການສຶກສາ ຄົ້ນຄວ້າໄດ້ຊີ້ໃຫ້ເຫັນເຖິງການພັດທະນາຕົວເມືອງເພື່ອຮອງ ຮັບການເຕີບໂຕໃນອະນາຄົດ ແລະ ກຳນົດບົດບາດຂອງ ການພັດທະນາໃຫ້ເປັນຕົວເມືອງ. ນະຄອນໄກສອນ ພົມວິຫານ ຍັງມີຄວາມສາມາດບົ່ມຊ້ອນທີ່ຈະກາຍເປັນຕົວ ເມືອງສູນກາງທີ່ມີພື້ນທີ່ຂະຫຍາຍຕົວ, ຊຸກຍູ້ການເຕີບໂຕ ດ້ານເສດຖະກິດ ແລະ ການປັບປຸງຄຸນນະພາບຊີວິດຂອງ ຊາວເມືອງ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິ ຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງ ກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນ ໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກ ສ່ວນໜຶ່ງ, ກໍລະກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ຫ້ອງການແຜນການ ແລະ ການລົງທຶນນະຄອນໄກສອນ ພົມວິຫານ. (2005). *ແຜນພັດທະນາເສດຖະກິດ-ສັງຄົມ ນະຄອນໄກສອນພົມວິຫານ 5 ປີ ຄັ້ງທີ V (2001-2005) ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຕໍ່ໜ້າ (2005 – 2010).* ນະຄອນ ໄກສອນພົມວິຫານ, ຫ້ອງການແຜນການ ແລະ ການ ລົງທຶນ.

ຫ້ອງການແຜນການ ແລະ ການລົງທຶນ ນະຄອນໄກສອນ ພົມວິຫານ. (2010). *ແຜນພັດທະນາເສດຖະກິດ-ສັງຄົມ ນະຄອນໄກສອນພົມວິຫານ 5 ປີ ຄັ້ງທີ VI (2005 -2010) ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຕໍ່ໜ້າ (2010 – 2015)*, ນະຄອນ ໄກສອນພົມວິຫານ ຫ້ອງການແຜນການ ແລະ ການ ລົງທຶນ.

ຫ້ອງການແຜນການ ແລະ ການລົງທຶນ ນະຄອນໄກສອນ ພົມວິຫານ. (2015). *ແຜນພັດທະນາເສດຖະກິດ-ສັງຄົມ ນະຄອນໄກສອນພົມວິຫານ 5 ປີ ຄັ້ງທີ VII (2010-2015) ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຕໍ່ໜ້າ (2015 - 2020),*ນະຄອນໄກ ສອນພົມວິຫານ, ຫ້ອງການແຜນການ ແລະ ການ ລົງທຶນ.

ຫ້ອງການແຜນການ ແລະ ການລົງທຶນ ນະຄອນໄກສອນ ພົມວິຫານ. (2020). *ແຜນພັດທະນາເສດຖະກິດ-ສັງຄົມ ນະຄອນໄກສອນພົມວິຫານ 5 ປີ ຄັ້ງທີ VIII (2015 -2020) ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຕໍ່ໜ້າ (2020 - 2025)*, ນະຄອນໄກ ສອນພົມວິຫານ: ຫ້ອງການແຜນການ ແລະ ການ ລົງທຶນ.

ສູນສະຖິຕິປະຈຳແຂວງສະຫວັນນະເຂດ. (2020). *ຂໍ້ມູນສະຖິຕິຂັ້ນທ້ອງຖິ່ນ*, ແຂວງສະຫວັນນະເຂດ ພະແນກແຜນການ ແລະ ການລົງທຶນແຂວງ.

Asian Development Bank. (2012). *Greater Mekong subregion east-west economic corridor towns development project Lao PDR (poverty and social assessment: Kaysonphomvihane).* Retrieve from: https://www.adb.org/projects/documents/regional-lao-peoples-democratic-republic-43319-022

Centre for Development and Environment University of Bern, Switzerland. (2018). *Urbanization processes in the Lao PDR*, Retirieve from: https://www.shareweb.ch/site/Poverty-Wellbeing/equality-equity inclusion/Documents/Lao_Urbanization_Study_CDE_final.pdf

Camagni, Roberto, Maria Cristina Gibelli, and Paolo Rigamonti. (2002). *Urban mobility and urban form: The social and environmental costs of different patterns of urban expansion*. Retrieve from: https://www.sciencedirect.com/science/article/abs/pii/ S0921800901002543

Cheng, J. (2003). *Understanding spatial and temporal processes of urban growth: cellular automata modelling.* Retrieve from: https://www.researchgate.net/publication/23541422Understanding_Spatial_and_Temporal_Processes_of_Urban_Growth_ Cellular_Automata_Modelling

Huang, X., Xia, J., Xiao, R., & He, T. (2017). Urban expansion patterns of 291 Chinese cities, 1990-2015. *International journal of digital earth. 12*, 62-77.

Helliwell, J.F., & Putnam, R.D. (1995). Economic growth and social capital in Italy. *Eastern Economic Journal, 21(3), 295.*

Holden, M. (2003). *Per capita gross domestic product: an appropriate measure of living standards? The case of newfoundland and labrador. economic division. parliamentary research branch, Canada.* Retrieve from: https://publi cations.gc.ca/collections/Collection-R/LoPBdP/PRB-e/PRB0314-e.pdf

Japan International Cooperation Agency. (2010). *Preparatory survey on formulation of basic strategies for regional core cities development in Lao People's Democratic Republic.* Retrieve from: https://openjicareport.jica.go.jp/pdf/11981081_01.pdf

Japan International Cooperation Agency. (2012). *Data collection survey on economic development of the southern region in Lao People's Democratic Republic.* Retrieve from: https://openjicareport.jica. go.jp/pdf/1000023022.pdf

Mienmany, B. (2018). *Analysis of land use and land cover changes and the driving forces: A case study in Kaysone Phomvihan District, Laos.* Retrieve from: https://iwaponline.com/aqua/article/doi/10.2166/aqua.024.311/100314/Analysis-of-land-use-land-cover-changes-and

Nolintha, V. (2011). *Cities, SEZs and connectivity in major provinces of Laos.* Retrieve from: https://www.ide.go.jp/library/English/Publish/Reports/Brc/pdf/06_ chapter4.pdf

Roberts, B., & Kanaley, T. (2006). *Urbanization and sustainability in Asia case studies of good practice.* Retrieve from: https://www.adb.org/sites/default/files/publication/27965/urbanization-sustainability .pdf

Spoorenberg, T. (2015). *Population estimation.* Retrieve from: https://www.un.org/development/desa/pd/sites/www.un.org.development.desa.pd/files/unpd_ws_201510_populationestimation.pdf

UN-Habitat. (2020). *Urbanization: a rapidly emerging development issue for Lao PDR.* Retrieve from: https://docplayer.net/ 216200222-Urbanization-a-rapidly-emerging-development-issue-for-lao-pdr.html

Wu, W. J., Zhao, S.Q., Zhu, C., & Jiang, J. L. (2015). A comparative Study of urban expansion in Beijing, Tianjin and Shijiazhuang over the past three decades. *Landscape and Urban Planning, 134,* 93-106.

Xu, Min, He, C., Liu, Z., & Dou, Y. (2007). *How did urban land expand in China between 1992 and 2015? A multi-scale landscape analysis*. Retrieve from: https://journals.plos.org/plosone/article?id=10.1371/journal.pone.0154839

Azarm, Z & Ranjbar, R.E. (2019). Investigating the nature of urban space transformation in historic cities of Iran (case study: Isfahan),

*Eastern Economic Journal, 21*(3), *295-307*
DOI:10.22034/bagh.2019.142454.3707

ຕາຕາລາງ 1 ສະແດງການເຕີບໂຕປະຊາກອນ ແລະ ຄົວເຮືອນ ປີ 2005, 2010, 2015, 2020

| | ປີ 2005 | ປີ 2010 | ອັດຕາການເພີ່ມຂຶ້ນທຽບປີ 2005 (ສ່ວນຮ້ອຍ) | ປີ 2015 | ອັດຕາການເພີ່ມຂຶ້ນທຽບປີ 2010 (ສ່ວນຮ້ອຍ) | ປີ 2020 | ອັດຕາການເພີ່ມຂຶ້ນທຽບປີ 2015 (ສ່ວນຮ້ອຍ) | ອັດຕາການເຕີບໂຕ 2005-2020 (ສ່ວນຮ້ອຍ) |
|---|---|---|---|---|---|---|---|---|
| ປະຊາກອນ | 112,915 | 121,86,1 | 7.34 | 125,622 | 2.99 | 178,893 | 29.77 | 36.88 |
| ຄົວເຮືອນ | 19,001 | 19,423 | 2.17 | 21,475 | 9.56 | 29,438 | 27.05 | 35.45 |

ທີ່ມາ: ສູນສະຖິຕິນະຄອນໄກສອນພົມວິຫານ, 2005, 2010, 2015, 2020

ຕາຕາລາງ 2 ການເຕີບໂຕພື້ນທີ່ຂອງນະຄອນໄກສອນພົມວິຫານ ປີ 2005, 2010, 2015, 2020

| | ປີ 2005 | ປີ 2010 | ອັດຕາການເພີ່ມຂຶ້ນທຽບ ໃສ່ປີ 2005 (ສ່ວນຮ້ອຍ) | ປີ 2015 | ອັດຕາການເພີ່ມຂຶ້ນທຽບ ໃສ່ປີ 2010 (ສ່ວນຮ້ອຍ) | ປີ 2020 | ອັດຕາການເພີ່ມຂຶ້ນທຽບໃສ່ປີ 2015 (ສ່ວນຮ້ອຍ) | ອັດຕາການເຕີບໂຕ 2005-2020 (ສ່ວນຮ້ອຍ) |
|---|---|---|---|---|---|---|---|---|
| ເນື້ອທີ່ອາຄານ (ha) | 432 | 633 | 31.75 | 724 | 12.56 | 865 | 16.30 | 50.06 |
| ຈຳນວນສິ່ງປຸກສ້າງ (ຫຼັງ) | 19,471 | 28,442 | 31.54 | 30,870 | 18.62 | 41,498 | 15.77 | 53.08 |
| ຈຳນວນຫຼັງຄາເຮືອນ | 18,090 | 20,123 | 10.10 | 22,019 | 8.61 | 23,106 | 4.70 | 21.71 |

ທີ່ມາ: ສຳຫຼວດຈາກພາບຖ່າຍທາງອາກາດ, 2005, 2010, 2015, 2020

ຕາຕາລາງ 3 ຄວາມໜາແໜ້ນປະຊາກອນທຽບໃສ່ເນື້ອທີ່ຂອງນະຄອນໄກສອນພົມວິຫານປີ 2005, 2010, 2015, 2020

| | ປະຊາກອນ (ຄົນ) | | | | ເນື້ອທີ່ | ຄວາມໜາແໜ້ນຂອງປະຊາກອນ (ຄົນ/km2) | | | |
|---|---|---|---|---|---|---|---|---|---|
| | 2005 | 2010 | 2015 | 2020 | (km2) | 2005 | 2010 | 2015 | 2020 |
| ນະຄອນໄກສອນພົມວິຫານ | 112,915 | 121,861 | 125,622 | 178,893 | 779,03 | 145 | 156.43 | 161.25 | 229.64 |

ຕາຕາລາງ 4 ການເຕີບໂຕພື້ນທີ່ຂອງເຂດເທສະບານນະຄອນໄກສອນພົມວິຫານ ປີ 2005, 2010, 2015, 2020

| | ປີ 2005 | ປີ 2010 | ອັດຕາການເພີ່ມຂຶ້ນທຽບໃສ່ປີ 2005 (ສ່ວນຮ້ອຍ) | ປີ 2015 | ອັດຕາການເພີ່ມຂຶ້ນທຽບໃສ່ປີ 2010 (ສ່ວນຮ້ອຍ) | ປີ 2020 | ອັດຕາການເພີ່ມຂຶ້ນທຽບໃສ່ປີ 2015 (ສ່ວນຮ້ອຍ) | ອັດຕາການເຕີບໂຕ 2005-2020 (ສ່ວນຮ້ອຍ) |
|---|---|---|---|---|---|---|---|---|
| ເນື້ອທີ່ອາຄານ (ha) | 332 | 509 | 34.77 | 572 | 11.01 | 691 | 17.22 | 51.95 |
| ຈຳນວນສິ່ງປຸກສ້າງ (ຫຼັງ) | 13,693 | 21,342 | 35.84 | 24,098 | 11.43 | 29,335 | 17.85 | 53.32 |

ທີ່ມາ: ສຳຫຼວດຈາກພາບຖ່າຍທາງອາກາດ, 2005, 2010, 2015, 2020

ຕາຕາລາງ 5 ຄວາມໜາແໜ້ນຂອງປະຊາກອນໃນເຂດເທສະບານນະຄອນໄກສອນພົມວິຫານ ປີ 2005, 2010, 2015, 2020

| | ປະຊາກອນ (ຄົນ) | | | | ເນື້ອທີ່ (ເຮັກຕາ) | ຄວາມໜາແໜ້ນຂອງປະຊາກອນ (ຄົນ/ເຮັກຕາ) | | | |
|---|---|---|---|---|---|---|---|---|---|
| | 2005 | 2010 | 2015 | 2020 | | 2005 | 2010 | 2015 | 2020 |
| ເທສະບານ ນະຄອນ ໄກສອນ ພົມວິຫານ | 69,694 | 79,010 | 88,325 | 97,641 | 15,976 | 4.36 | 4.95 | 5.53 | 6.11 |

ທີ່ມາ: ສູນສະຖິຕິປະຈຳແຂວງສະຫວັນນະເຂດ, 2005, 2010, 2015, 2020




ທີ່ມາ: ທີມງານຄົ້ນຄວ້າ

ຮູບທີ 1 ສະແດງການເຕີບໂຕສິ່ງປຸກສ້າງນະຄອນໄກສອນພົມວິຫານ ປີ 2005, 2010, 2015, 2020




ທີ່ມາ: ທີມງານຄົ້ນຄວ້າ

ຮູບທີ 2 ສະແດງການເຕີບໂຕສິ່ງປຸກສ້າງເຂດເທສະບານຕົວເມືອງນະຄອນໄກສອນພົມວິຫານ ປີ 2005, 2010, 2015, 2020